**ຈຸດປະສົງ ແຜນພັດທະນາຕອບໂຕ້ ໂຄວິດ-19**

ຮັບປະກັນນັກຮຽນຈຳນວນຫຼາຍຂຶ້ນ, ໂດຍສະເພາະເດັກຍິງ ແລະ ກຸ່ມດ້ອຍໂອກາດ ສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກເປັນ ພ້ອມທັງມີທັກສະຊີວິດເພື່ອປະກອບສ່ວນເຂົ້າໃນກຳລັງແຮງງານທີ່ມີປະສິດທິພາບ

**ຄາດໝາຍຜົນໄດ້ຮັບຂອງ ສປປ ລາວ**

ເພີ່ມຈຳນວນນັກຮຽນໃນຊັ້ນປະຖົມສຶກສາ ທີ່ສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກເປັນ

ເພີ່ມຈຳນວນຄູທີ່ມີຄຸນວຸດທິ ແລະ ຄວາມສາມາດ, ພ້ອມທັງຜົນການຮຽນຂອງນັກຮຽນທີ່ດີຂຶ້ນໃນທຸກວິຊາຂອງຫຼັກສູດແຫ່ງຊາດສະບັບປັບປຸງໃໝ່

**ເປົ້າໝາຍແຜນພັດທະນາແບບຍືນຍົງ 4.1**

ຮັບປະກັນວ່າເດັກຍິງ ແລະ ເດັກຊາຍທຸກຄົນໄດ້ຮຽນຈົບຊັ້ນປະຖົມ ແລະ ມັດທະຍົມໂດຍບໍ່ເສຍຄ່າ, ເທົ່າທຽມກັນ ແລະ ມີຄຸນນະພາບ ເຊິ່ງນຳໄປສູ່ຜົນການຮຽນຮູ້ທີ່ສອດຄ່ອງ ແລະ ມີປະສິດທິຜົນ.

## ເປົ້າໝາຍ

ຊ່ວຍໃຫ້ເດັກຍິງ ແລະ ເດັກຊາຍທີ່ຢູ່ໃນເກນເຂົ້າຮຽນຊັ້ນປະຖົມສຶກສາ, ໂດຍສະເພາະກໍແມ່ນເດັກທີ່ດ້ອຍໂອກາດ, ມີສ່ວນຮ່ວມຫຼາຍຂຶ້ນໃນດ້ານການຮຽນ ແລະ ໄດ້ຮັບການປັບປຸງຜົນການຮຽນໃຫ້ດີຂຶ້ນ

### EOPO 1 – ປັບປຸງການສິດສອນ

ໃນປີ 2023, ຄູຊັ້ນປະຖົມ ໃນເມືອງເປົ້າໝາຍ ນຳໃຊ້ຮູບແບບການສອນແບບຮຽນຮ່ວມ ທີ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງນັກຮຽນໄດ້ດີຂຶ້ນ

### EOPO 2 – ປັບປຸງການຮຽນ

ໃນປີ 2030, ນັກຮຽນຊັ້ນປະຖົມ ໃນເມືອງເປົ້າໝາຍ ສະແດງໃຫ້ເຫັນເຖິງການມີສ່ວນຮ່ວມໃນການຮຽນຫຼາຍຂຶ້ນ ແລະ ໄດ້ຮັບການປັບປຸງຜົນການຮຽນໃຫ້ດີຂຶ້ນ

### IO1 ຫຼັກສູດຊັ້ນປະຖົມ ແລະ ຊັບພະຍາກອນການຮຽນຮູ້

ໃນປີ 2026, ປັບປຸງຫຼັກສູດຊັ້ນປະຖົມ ໂດຍອີງໃສ່ການຮຽນທີ່ເນັ້ນໃສ່ການປະຕິບັດຕົວຈິງ ແລະ ການຮຽນຮ່ວມ ໄດ້ຮັບການນຳສະເໜີ ໃນທົ່ວປະເທດ

- ການພັດທະນາຫຼັກສູດ ແລະ ການນຳໃຊ້ຈົນໄປຮອດຂັ້ນ ປ.5
- ການຝຶກອົບຮົມໃຫ້ຄູສອນ ທົ່ວປະເທດ
- ການຄຸ້ມຄອງຫຼັກສູດ
- ການປະເມີນນັກຮຽນ
- ການຝຶກເວົ້າພາສາລາວ

### IO2 ວຽກງານການພັດທະນາວິຊາຊີບຄູ

ໃນປີ 2026, ປັບປຸງຄວາມຮູ້ ແລະ ທັກສະການສອນຂອງຄູປະຖົມ ໃນເມືອງເປົ້າໝາຍ ໃຫ້ດີຂຶ້ນ

- ນະໂຍບາຍໃນການພັດທະນາວິຊາຊີບຄູ
- ຄວາມອາດສາມາດ ແລະ ການຈັດຕັ້ງປະຕິບັດການຝຶກອົບຮົມຄູຂອງວິທະຍາໄລຄູ
- ການຈັດຕັ້ງປະຕິບັດລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນລະດັບໂຮງຮຽນ

### IO3 ການຄຸ້ມຄອງ ແລະ ສະໜັບສະໜູນຄູ

ໃນປີ 2026, ລະບົບການຄຸ້ມຄອງ ແລະ ການສະໜັບສະໜູນ ສຳລັບການພັດທະນາວິຊາຊີບແບບຕໍ່ເນື່ອງສຳລັບຄູ ເພື່ອປັບປຸງການສອນ ໄດ້ຮັບການສ້າງຂຶ້ນ ແລະ ໄດ້ຮັບການຄຸ້ມຄອງ ແລະ ດຳເນີນການ ໃນເມືອງເປົ້າໝາຍ

- ຄວາມເປັນຜູ້ນຳດ້ານການຮຽນ-ການສອນຢູ່ໃນໂຮງຮຽນ
- ການຊ່ວຍເຫຼືອດ້ານການຮຽນ-ການສອນໃນຂັ້ນເມືອງ
- ນະໂຍບາຍການຄຸ້ມຄອງຄູ

### ກິດຈະກຳທີ່ເປັນໂຕຂັບເຄື່ອນແຜນງານ

ຍຸດທະສາດໃນການຕິດຕາມ, ການປະເມີນຜົນ ແລະ ການຮຽນຮູ້ / ຍຸດທະສາດໃນດ້ານການສຶກສາບົດບາດຍິງ-ຊາຍ ແລະ ການຮຽນຮ່ວມ / ຍຸດທະສາດໃນການຮັບມືກັບພະຍາດອັກເສບປອດໂຄວິດ-19 / ການໂຄສະນາສື່ສານ